ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຍທຂ
PWT

ກະຊວງໂຍທາທິການ ແລະ ຂົນສົ່ງ
ຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ
ແກ້ໄຂ ການລະບາດພະຍາດໂຄວິດ-19

ເລກທີ 8485 /ຍທຂ
ນະຄອນຫລວງວຽງຈັນ, ວັນທີ 27 ເມສາ 2021

# ຄໍາແນະນໍາ

## ກ່ຽວກັບການນໍາໃຊ້ ໜັງສືຄໍ້າປະກັນທາງດ້ານຄວາມປອດໄພຈາກ ໂຄວິດ-19

- ອີງຕາມ ຄໍາສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານເພື່ອຕ້ານພະຍາດ ໂຄວິດ-19, ເລກທີ 15/ນຍ, ລົງວັນທີ 21/04/2021;
- ອີງຕາມ ແຈ້ງການຂອງກະຊວງໂຍທາທິການ ແລະ ຂົນສົ່ງ ກ່ຽວກັບການຂົນສົ່ງໂດຍສານ ແລະ ສິນຄ້າ ຢູ່ ສປປ ລາວ ໃນໄລຍະສືບຕໍ່ປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-19, ສະບັບເລກທີ 242/ຍທຂ, ລົງວັນທີ 23/04/2021.

ຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດພະຍາດໂຄວິດ-19 ຂອງ ກະຊວງໂຍທາທິການ ແລະ ຂົນສົ່ງອອກຄໍາແນະກ່ຽວກັບການນໍາໃຊ້ ໜັງສືຄໍ້າປະກັນ ທາງດ້ານຄວາມປອດໄພຈາກ ໂຄວິດ-19 ດັ່ງນີ້:

1. ໜັງສືຄໍ້າປະກັນສະບັບນີ້ ໃຊ້ສໍາລັບລົດຂົນສົ່ງ ຂອງຕ່າງປະເທດ ຂົນສົ່ງນໍ້າມັນເຊື້ອໄຟ, ສິນຄ້າທາດແຫຼວ, ອາຍແກັສ, ຢາງປູທາງ, ສິນຄ້າອັນຕະລາຍ ແລະ ວັດຖຸອຸປະກອນ, ເຄື່ອງຈັກຜະລິດ ເພື່ອມາຮັບໃຊ້ໂຄງການຂອງລັດຖະບານ, ເຄື່ອງຊ່ວຍເຫຼືອ ທາງດ້ານອຸປະກອນການແພດ ເພື່ອຮັບມືກັບການລະບາດພະຍາດ ແລະ ໄພພິບັດ ຕ່າງໆ ຊຶ່ງຄະນະສະເພາະກິດປະຈໍາດ່ານສາກົນ ພິຈາລະນາແລ້ວເຫັນວ່າ ບໍ່ສາມາດຖ່ຽນຖ່າຍ ຫຼື ມີຄວາມສ່ຽງດ້ານຄວາມປອດໄພໃນການຖ່ຽນຖ່າຍ ຈຶ່ງອະນຸຍາດໃຫ້ລົດຂົນສົ່ງໄປຮອດປາຍທາງໄດ້;
2. ໜັງສືຄໍາ້ປະກັນ ຕ້ອງເຮັດເປັນ 2 ສະບັບ ເພື່ອເອົາໄວ້ນໍາຄະນະສະເພາະກິດປະຈໍາດ່ານສາກົນ 1 ສະບັບ ແລະ ຕິດໄປນໍາລົດ 1 ສະບັບ ເພື່ອສະດວກເວລາເຈົ້າໜ້າທີ່ກວດກາຕາມເສັ້ນທາງຂົນສົ່ງ;
3. ໃນການຂຽນຂໍ້ມູນເຂົ້າໃນໜັງສືຄໍາ້ປະກັນ ຕ້ອງໃຫ້ຈະແຈ້ງ, ຊັດເຈນ, ຫ້າມລຶບ, ຕື່ມ, ປ່ຽນແປງ ຫລື ປອມແປງ ຂໍ້ຄວາມທີ່ລະບຸໄວ້ໃນໜັງສືຄໍ້າປະກັນ;
4. ໜັງສືຄໍ້າປະກັນ ແມ່ນສາມາດນໍາໃຊ້ໄດ້ສະເພາະລົດ ແລະ ຄົນຂັບລົດ ທີ່ໄດ້ຮັບອະນຸຍາດເທົ່ານັ້ນ ແລະ ເວລາອອກຄືນ ຕ້ອງໄດ້ແຈ້ງໃຫ້ຄະນະສະເພາະກິດ ປະຈໍາດ່ານສາກົນ ເພື່ອຄຸ້ມຄອງ;
5. ລົດຂົນສົ່ງສິນຄ້າພາຍໃນປະເທດ ແລະ ລົດຂົນສົ່ງສິນຄ້າຕ່າງປະເທດ ທີ່ມາສົ່ງເຄື່ອງຢູ່ດ່ານຊາຍແດນແລ້ວກັບຄືນປະເທດທັນທີ ແມ່ນບໍ່ຈໍາເປັນນໍາໃຊ້ໜັງສືຄໍ້າປະກັນສະບັບນີ້;

6. ໃຫ້ບັນດາ ຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ, ແລະ ແກ້ໄຂການລະບາດພະຍາດໂຄວິດ-19, ພະແນກ ໂຍທາທິການ ແລະ ຂົນສົ່ງ ນະຄອນຫລວງວຽງຈັນ ແລະ ບັນດາແຂວງ, ຜູ້ປະກອບການຂົນສົ່ງສິນຄ້າ, ຜູ້ຈັດສົ່ງ, ເຈົ້າຂອງໂຄງການ ແລະ ເຈົ້າຂອງສິນຄ້າ ປະຕິບັດຕາມຄໍາແນະນໍາສະບັບນີ້ຢ່າງເປັນເອກະພາບທົ່ວປະເທດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ຈົນກ່ວາຈະມີການປ່ຽນແປງ.

**ຮອງລັດຖະມົນຕີ**

ຄະນະສະເພາະກິດເພື່ອ ປ້ອງກັນ, ຄວບຄຸມ, ແລະ

ແກ້ໄຂ ການລະບາດພະຍາດໂຄວິດ-19

ລັດຖະມົນຕີ

ລັນ ແສງອາພອນ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

(ຊື່ ບໍລິສັດຂົນສົ່ງ/ຈັດສົ່ງ, ເຈົ້າຂອງສິນຄ້າ ຫຼື ເຈົ້າຂອງໂຄງການ)
.............................................................. ເລກທີ:...............
ວັນທີ:

## ໜັງສືຄໍ້າປະກັນ
## ທາງດ້ານຄວາມປອດໄພຈາກ ໂຄວິດ-19

ຮຽນ: ເຈົ້າໜ້າທີ່ໜ່ວຍງານສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ການແກ້ໄຂ ການແຜ່ລະບາດພະຍາດ ໂຄວິດ-19 ປະຈຳດ່ານສາກົນ.....................................................................................

ເລື່ອງ: ຄໍ້າປະກັນການປ້ອງກັນຄວາມປອດໄພໃນການນຳເຂົ້າພາຫານະຂົນສົ່ງ ແລະ ວັດຖຸອຸປະກອນ ເພື່ອຮັບໃຊ້ໂຄງການ.....................................................................................

- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານເພື່ອຕ້ານພະຍາດ ໂຄວິດ-19, ເລກທີ 15/ນຍ, ລົງວັນທີ 21/04/2021;
- ອີງຕາມ ແຈ້ງການຂອງກະຊວງໂຍທາທິການ ແລະ ຂົນສົ່ງ ກ່ຽວກັບການຂົນສົ່ງໂດຍສານ ແລະ ສິນຄ້າ ຢູ່ ສປປ ລາວ ໃນໄລຍະສືບຕໍ່ປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-19, ສະບັບເລກທີ 242/ຍທຂ, ລົງວັນທີ 23/04/2021.

ເພື່ອປະຕິບັດຕາມມາດຕະການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການແຜ່ລະບາດຂອງພະຍາດໂຄວິດ-19 ຕາມຄຳສັ່ງຂອງລັດຖະບານ ແລະ ແຈ້ງການຂອງຂະແໜງການກ່ຽວຂ້ອງ:
ຂ້າພະເຈົ້າ ຊື່ ແລະ ນາມສະກຸນ........................................, ໜ້າທີ່ຮັບຜິດຊອບ: ............................,
ສັງກັດບໍລິສັດ:..................................................., ທີ່ຕັ້ງບໍລິສັດ..............................................
ເບີໂທລະສັບ.................................... ຂໍອະນຸຍາດນຳເຂົ້າພາຫະນະຂົນສົ່ງ ສິນຄ້າ ແລະ ວັດຖຸອຸປະກອນ
ຈາກປະເທດ.......................................... ເພື່ອຮັບໃຊ້ໃຫ້ແກ່ໂຄງການ........................................
......................................................................................................, ຕາມລາຍລະອຽດດັ່ງລຸ່ມນີ້:

### 1. ຂໍ້ມູນຂອງຜູ້ຂັບລົດ ແລະ ພາຫະນະຂົນສົ່ງ

- ຊື່ ແລະ ນາມສະກຸນ ຄົນຂັບລົດ:.........................................................................................;
- ໜັງສືຜ່ານແດນເລກທີ (Passport No.):................................................................................;
- ໜັງສືຢັ້ງຢືນຜົນຂອງການກວດຫາເຊື້ອພະຍາດ ໂຄວິດ-19 ເປັນລົບ ຢ່າງໜ້ອຍ 72 ຊົ່ວໂມງ ຈາກໂຮງໝໍລັດຖະບານ, ລົງວັນທີກວດ..........................................;
- ທະບຽນລົດ:.................., ທະບຽນຫົວລາກ.................., ທະບຽນຫາງລາກ.....................
- ດ່ານເຂົ້າ.........................................., ດ່ານອອກ...........................................
- ເສັ້ນທາງຂົນສົ່ງ ຕົ້ນທາງຫາປາຍທາງລະອຽດ:.........................................................................
  .........................................................................................................
  .........................................................................................................

- ກໍລະນີນອນຄ້າງຄືນ ມີແຜນລະອຽດຄັດຕິດມາພ້ອມນີ້ ເປັນຕົ້ນແມ່ນຂໍ້ມູນ ສະຖານທີ່ ກິນ, ຢູ່ ແລະ ພັກເຊົາ ແຍກດ່ຽວໃຫ້ຜູ້ຂັບຂີ່ ໃນເວລາເດີນທາງ, ຢຸດແວ່ພັກຜ່ອນລະຫວ່າງທາງ ແລະ ເວລາເອົາເຄື່ອງລົງຢູ່ປາຍທາງ.

2. ມາດຕະການປ້ອງກັນ

- ກໍລະນີ ເປັນການຂົນສົ່ງພິເສດ ຫຼື ເປັນຂະບວນ ໃຫ້ມີລົດນໍາຂະບວນ ຈາກຕົ້ນທາງຫາປາຍທາງ, ບໍ່ອະນຸຍາດ ໃຫ້ອອກນອກເສັ້ນທາງທີ່ກໍານົດ;
- ຜູ້ຂັບຂີ່ຕ້ອງປະຕິບັດຕາມມາດຕະການທີ່ ກະຊວງ ຍທຂ ແລະ ຄະນະສະເພາະກິດວາງອອກ.

ຂ້າພະເຈົ້າ ຂໍຮັບປະກັນວ່າຈະປະຕິບັດ ບັນດາມາດຕະການປ້ອງກັນການແຜ່ລະບາດຂອງພະຍາດໂຄວິດ-19 ຢ່າງເຂັ້ມງວດ, ຖ້າມີການລະເມີດ ເຮັດໃຫ້ມີການແຜ່ເຊື້ອພະຍາດໂຄວິດ-19 ຈາກການຂົນສົ່ງຄັ້ງນີ້ ຂ້າພະເຈົ້າຈະຂໍຮັບຜິດຊອບ ຕໍ່ຜົນເສຍຫາຍທັງໝົດຕາມ ກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ ວາງອອກ.

**ໝາຍເຫດ**: ໜັງສືຄໍ້າປະກັນ ສະບັບນີ້ ນໍາໃຊ້ໄດ້ພຽງຖ້ຽວດຽວເທົ່ານັ້ນ.

ເຊັນ ແລະຈໍ້າກາ ຈາກຜູ້ຄໍ້າປະກັນ